# ຜູ້ແທນປະຊາຊົນ
PHOUTHEN PASAXON

24-26 ມິຖຸນາ 2020
ປີທີ 9
ສະບັບທີ 676

ສຽງຂອງສະພາແຫ່ງຊາດ

ສຳນັກງານຕັ້ງຢູ່ອາຄານຄະນະເລຂາທິການສະພາແຫ່ງຊາດ, ເຂດທາດຫຼວງ ຕູ້ ປ.ນ 662 ໂທລະສັບ ແລະ ໂທລະສານ: 413522, 454563 Email: phouthen.na@gmail.com


## ບົດສູນທອນພົດ ຂອງທ່ານ ນາງ ປານີ ຢາທໍ່ຕູ້ ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ ກ່າວໄຂກອງປະຊຸມສະໄໝສາມັນເທື່ອທີ 9 ຂອງສະພາແຫ່ງຊາດຊຸດທີ VIII




ຂໍຮຽນ: - ທ່ານ ບຸນຍັງ ວໍລະຈິດ ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກ, ປະທານປະເທດ ທີ່ເຄົາລົບ ແລະ ນັບຖືຢ່າງສູງ,

- ບັນດາທ່ານຜູ້ນຳພັກ-ລັດ ທີ່ນັບຖື.

-ບັນດາທ່ານສະມາຊິກສະພາແຫ່ງຊາດ, ແຂກທີ່ມີກຽດທີ່ນັບຖື ແລະ ຮັກແພງ.

ມື້ນີ້ ກອງປະຊຸມສະໄໝສາມັນເທື່ອທີ 9 ຂອງສະພາແຫ່ງຊາດຊຸດທີ VIII ໄດ້ໄຂຂຶ້ນຢ່າງເປັນທາງການ ໃນທ່າມກາງບັນຍາກາດທີ່ທົ່ວພັກ-ລັດ, ກຳລັງປະກອບອາວຸດ ແລະ ປະຊາຊົນລາວບັນດາເຜົ່າ ສືບຕໍ່ສ້າງຂະບວນການຄຳນັບຮັບຕ້ອນການດຳເນີນກອງປະຊຸມໃຫຍ່ສາມຂັ້ນ ດ້ວຍຄວາມເປັນເຈົ້າການ ໄປພ້ອມກັບການສຸມໃສ່ປະຕິບັດບັນດາມາດຕະການປ້ອງກັນ, ຄວບຄຸມ ແລະ ແກ້ໄຂ ການແຜ່ລະບາດຂອງພະ

ອ່ານຕໍ່ໜ້າ 2

## ໄຂກອງປະຊຸມສະໄໝສາມັນເທື່ອທີ 9 ຂອງ ສພຊ ຊຸດທີ VIII ຢ່າງເປັນທາງການ




(ສພຊ) ໃນຕອນເຊົ້າວັນພຸດທີ 24 ມິຖຸນາ 2020 ທີ່ຫ້ອງປະຊຸມສະພາແຫ່ງຊາດ (ຫລັກ 6) ນະຄອນຫລວງວຽງຈັນ ໄດ້ມີພິທີເປີດກອງປະຊຸມສະໄໝສາມັນເທື່ອທີ 9 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ VIII ຢ່າງເປັນທາງການ ໂດຍການເປັນປະທານຂອງທ່ານ ນາງ ປານີ ຢາທໍ່ຕູ້ ປະທານສະພາແຫ່ງຊາດ; ເຂົ້າຮ່ວມມີທ່ານ ບຸນຍັງ ວໍລະຈິດ ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກ, ປະທານປະເທດ; ທ່ານ ທອງລຸນ ສີສຸລິດ ນາຍົກລັດຖະມົນຕີ, ມີການນຳພັກ-ລັດ, ສະມາຊິກສະພາແຫ່ງຊາດ (ສສຊ), ຕາງໜ້າຈາກອົງການຈັດຕັ້ງພັກ-ລັດ, ອົງການຈັດຕັ້ງແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ພ້ອມດ້ວຍຜູ້ຕາງໜ້າຈາກພາກສ່ວນຕ່າງໆ ແລະ ແຂກ

ອ່ານຕໍ່ໜ້າ 2

## ບົດລາຍງານຂອງລັດຖະບານຕໍ່ກອງປະຊຸມສະໄໝສາມັນເທື່ອທີ 9 ຂອງສະພາແຫ່ງຊາດຊຸດທີ VIII



ວັນທີ 24 ມິຖຸນາ 2020 ທ່ານ ທອງລຸນ ສີສຸລິດ ນາຍົກລັດຖະມົນຕີ ໄດ້ລາຍງານກ່ຽວກັບສະພາບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານ ແລະ ແຜນເງິນຕາ 5 ເດືອນ, ຄາດຄະເນ 6 ເດືອນຕົ້ນປີ ແລະ ທິດທາງວຽກງານຈຸດສຸມ 6 ເດືອນທ້າຍປີ 2020 ຕໍ່ກອງປະຊຸມສະໄໝສາມັນເທື່ອທີ 9 ຂອງສະພາແຫ່ງຊາດຊຸດທີ VIII.

I. ສະພາບແວດລ້ອມໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານ ປີ 2020:

ສາມາດເວົ້າໄດ້ວ່າ ສະພາບແວດລ້ອມ ແລະ ເງື່ອນໄຂຂອງການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດສັງຄົມຕາມມະຕິຕົກລົງຂອງສະພາແຫ່ງຊາດ ສະບັບເລກທີ 20/ສພຊ, ລົງວັນທີ 18 ພະຈິກ 2019 ນັ້ນ ແມ່ນເຕັມໄປດ້ວຍຄວາມຫຍຸ້ງຍາກ ແລະ ອຸປະສັກ. ອຸປະສັກທີ່ເນື່ອງມາຈາກຄວາມບໍ່ທັນເຂັ້ມແຂງຂອງເສດຖະກິດມະຫາພາກຂອງປະເທດເຮົາ ທີ່ມີຄວາມບອບບາງ ແລະ ຢູ່ໃນລະດັບໝິ່ນໆມາຫລາຍປີ ທີ່ສະສົມຢູ່ແລ້ວຍັງແກ້ບໍ່ທັນຕົກ ໃນປີ 2019 ຜ່ານມາ ເຖິງວ່າລັດຖະບານ ໄດ້ພະຍາຍາມສຸມກຳລັງຈັດຕັ້ງປະຕິບັດແຜນ ເພື່ອໃຫ້ບັນລຸບັນດາຄາດໝາຍທີ່ວາງໄວ້ ແຕ່ກໍຍັງປະຕິບັດຕົວເລກຄາດໝາຍຫລາຍດ້ານບໍ່ໄດ້ຕາມແຜນວາງໄວ້ ແລະ ການແກ້ໄຂຄວາມສ່ຽງຕ່າງໆ ກໍຍັງບໍ່ທັນຕົກໄດ້. ດັ່ງນັ້ນ, ປີ 2019 ຜ່ານໄປ, ສະພາບເສດຖະກິດຂອງປະເທດເຮົາ ຍັງບໍ່ທັນພົ້ນຈາກສະພາບຕາບຈູນ. ດັ່ງນັ້ນ, ການວາງຄາດໝາຍຕົວເລກມະຫາພາກສຳລັບປີ 2020 ຈຶ່ງໄດ້ສະເໜີຫລຸດປີ 2019, ທັງນີ້ ກໍຍ້ອນວ່າລັດຖະບານ ພະຍາຍາມສືບຕໍ່ປັບປ່ຽນວິທີຄິດ ໃນການວາງແຜນ ແລະ ກຳນົດຄາດໝາຍໃຫ້ແທດກັບຕົວຈິງທີ່ສຸດ ເພື່ອຢາກໃຫ້ເປັນໄປໄດ້ໃນທາງປະຕິບັດ. ເບື້ອງຕົ້ນ ລັດຖະບານກໍຄິດວ່າແຜນທີ່ຖືກຮັບຮອງຈາກສະພາແຫ່ງຊາດນີ້, ລັດຖະບານ ກໍຈະສູ້ຊົນສຸດຂີດ ຖ້າບໍ່ໄດ້ເຕັມສ່ວນ ກໍອາດຈະຫລຸດບໍ່ຫລາຍເກີນໄປ.

ແຕ່ສິ່ງທີ່ບໍ່ຄາດຝັນກໍເກີດຂຶ້ນ, ເຫດການໂຄວິດ-19 ນັ້ນ ເກີດຂຶ້ນໃນໄຕມາດທີ 1 ຂອງປີ 2020 ແລະ ເຫດການນີ້ ມັນເປັນຜົນກະທົບຊ້ຳເຕີມໃສ່ສະພາບຄວາມບອບບາງຂອງເສດຖະກິດປະເທດເຮົາຢ່າງໜັກໜ່ວງທີ່ສຸດ; ໂຄວິດ-19 ກາຍເປັນບັນຫາໃຫຍ່ຂອງໂລກ (ມະຫັນຕະໄພ) ທີ່ທຳລາຍສະຖຽນລະພາບທາງດ້ານການເມືອງ, ຄວາມໝັ້ນຄົງ ແລະ ເສດຖະກິດຂອງເກືອບທຸກປະເທດໃນ

ອ່ານຕໍ່ສະບັບໜ້າ

## ຕາງໜ້າ ຄປຈ ສພຊ ປະກອບຄຳເຫັນຕໍ່ບົດລາຍງານຂອງລັດຖະບານ



ໜ້າ 3

## ປຶກສາຫາລືກະກຽມດຳເນີນກອງປະຊຸມສະໄໝສາມັນເທື່ອທີ 9



ໜ້າ 2